ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຫ້ອງການ

ເລກທີ ...409.../ຫກ

ນະຄອນຫຼວງວຽງຈັນ,ວັນທີ...06 ກັນຍາ 2024

## ໜັງສືແຈ້ງເຊີນປະມູນ

**ໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ (ສ້ອມແປງອາຄານຫໍສະໝຸດແຫ່ງຊາດ ໄລຍະ II ພື້ນກະໂລ້ຊັ້ນ 2, ແອເຢັນ, ລະບົບນ້ຳປະປາ)**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 1259/ຖວທ, ລົງວັນທີ 06 ທັນວາ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ (ສ້ອມແປງອາຄານຫໍສະໝຸດແຫ່ງຊາດໄລຍະ II ພື້ນກະໂລ້ຊັ້ນ 2, ແອເຢັນ, ລະບົບນ້ຳປະປາ)ສະບັບເລກທີ 898/ຖວທ , ລົງວັນທີ 29 ສິງຫາ 2024;
- ອີງຕາມ ແຈ້ງການ ແຈ້ງແຜນການລົງທຶນຂອງລັດປະຈຳປີ 2024 ຄັ້ງທີ (III) ສະບັບເລກທີ 1545/ກຜທ.ກຜ4, ລົງວັນທີ 27 ມິຖຸນາ 2024.

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ (ບ້ວງທຶນປົກກະຕິ) ແຜນປີ 2024 ຄັ້ງທີ (III) ໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ (ສ້ອມແປງອາຄານຫໍສະໝຸດແຫ່ງຊາດໄລຍະ II ພື້ນກະໂລ້ຊັ້ນ 2, ແອເຢັນ, ລະບົບນ້ຳປະປາ). ສຳລັບໄລຍະເວລາຂອງການສ້ອມແປງທັງໝົດແມ່ນບໍ່ໃຫ້ກາຍ 10 ເດືອນ ນັບຕັ້ງແຕ່ມື້ອອກໃບສັ່ງວຽກໃຫ້ຈັດຕັ້ງປະຕິບັດຈົນເຖິງມື້ມອບ - ຮັບໂຄງການ;
2. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນສ້ອມແປງອາຄານຫໍສະໝຸດແຫ່ງຊາດໄລຍະ II (ພື້ນກະໂລ້ຊັ້ນ 2, ແອເຢັນ, ລະບົບນ້ຳປະປາ);
3. ໃນການປະມູນແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ (ສຳເນົາດ້ານຫຼັງມາພ້ອມ) ແລະ ມີໃບອະນຸຍາດດຳເນີນທຸລະກິດທາງດ້ານການກໍ່ສ້າງ, ສ້ອມແປງເຄຫາສະຖານປະຈຳປີ 2024 ແລະ ໃບຢັ້ງຢືນການມອບອາກອນປີ 2023;

5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກການກວດກາບັນຊີແບບຄົບຊຸດປະຈຳປີ 2023 ອອກໂດຍກົມສ່ວຍສາອາກອນ (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນຜ່ານມາວົງເງິນບໍ່ຫຼຸດ 2,000,000,000 ກີບ ຂຽນເປັນໂຕໜັງສື (ສອງຕື້ກີບ) ແລະ ບັນຊີສຳຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;
6. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນ ໄດ້ນຳຄະນະຮັບຜິດຊອບໂຄງການຢູ່ທີ່ ຫ້ອງການຂະແໜງຄຸ້ມຄອງບໍລິຫານ (ຫໍສະໝຸດແຫ່ງຊາດ), ບ້ານສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ສອບຖາມຂໍ້ມູນໂທ: 020 5562 2010 ນາງ ສາວິຕີ ຈັນທະພົມມາ ແລະ ຫ້ອງການ ກົມແຜນການ ແລະ ການຮ່ວມມືສາກົນ (ພະແນກແຜນການ ແລະ ການລົງທຶນ), ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສອບຖາມຂໍ້ມູນໂທ: 020 5624 9151 ນາງ ນິງພອນ ຄຳສອນ, ການຂາຍຊອງປະມູນເລີ່ມແຕ່ວັນທີ 9 ກັນຍາ 2024 (ຕາມໂມງລັດຖະການ)ໃນລາຄາ 2,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄໍ້າປະກັນການປະມູນດ້ວຍເງິນສົດ, ແຊັກ(ວິຊ້າ) ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງຂອງວັນທີ 30 ກັນຍາ 2024 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງຂອງວັນທີ 30 ກັນຍາ 2024 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ./.

**ຫົວໜ້າຫ້ອງການ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຫ້ອງການ

ບົວໄລ ພານຸວົງ